ສາທາລະນະລັດປະຊາທິປະໄຕປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ກະຊວງການເງິນ
ກົມພາສີ

ເລກທີ 0749 /ກພສ
ລົງວັນທີ 24 ກຸມພາ 2007

# ແຈ້ງການ

ເຖິງ : ທີ່ວໜ້າຫ້ອງພາສີ , ທີ່ວໜ້າດ່ານພາສີ ປະຈຳນະຄອນຫລວງ ແລະ ບັນດາແຂວງ ໃນຂອບເຂດທົ່ວປະເທດ.

ເລື່ອງ: ລະບຽບການຂົນສົ່ງສິນຄ້າຜ່ານແດນ.

- ອີງຕາມກົດໝາຍພາສີ ສະບັບເລກທີ 05/ສພຊ ລົງວັນທີ 20.5.2005.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ລະບຽບການຂົນສົ່ງສິນຄ້າຜ່ານແດນ ມີຄວາມເຂົ້າໃຈເປັນເອກະພາບໃນຂອບເຂດທົ່ວປະເທດ, ແນໃສ່ສ້າງກົນໄກອຳນວຍຄວາມສະດວກໃຫ້ແກ່ການຂົນສົ່ງຜ່ານແດນ ທັງຈຳກັດບັນດາຊ່ອງຫວ່າງທີ່ອາດຈະພາໃຫ້ເກີດມີການລະເມີດລະບຽບກົດໝາຍຂອງລັດ.

**ທີ່ວຫນ້າກົມພາສີ ອອກແຈ້ງການ ດັ່ງຕໍ່ໄປນີ້ :**

1. ຜູ້ມີຈຸດປະສົງຢາກດຳເນີນກິດຈະການ ກ່ຽວກັບການຂົນສົ່ງສິນຄ້າຜ່ານແດນ ຕ້ອງມີໃບອະນຸຍາດດຳເນີນທຸລະກິດການຂົນສົ່ງ ອອກໂດຍກົມຂົນສົ່ງ, ກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະກໍ່ສ້າງ.
2. ສະມະຄົມຜູ້ຈັດສົ່ງສິນຄ້າລະຫ່ວາງປະເທດລາວ(LIFFA)ຕ້ອງໄດ້ເປັນຕົວແທນສະເໜີຂໍຄ້ຳປະກັນການຕົກເຮັ່ຍເສຍຫາຍຂອງສິນຄ້າ ໃນເວລາຂົນສົ່ງຜ່ານແດນ ຕໍ່ກົມພາສີ ໃຫ້ແກ່ບໍລິສັດທີ່ຈະເຮັດການຂົນສົ່ງຜ່ານແດນ ເຊິ່ງການຄ້ຳປະກັນດັ່ງກ່າວຈະຕ້ອງລວມເຖິງສິນຄ້າ, ລົດບັນທຸກ, ຕູ້ບັນທຸກສິນຄ້າຜ່ານແດນ, ຈາກນັ້ນກົມພາສີຈະພິຈາລະນາອະນຸມັດ ໃຫ້ທຳການຂົນສົ່ງຜ່ານແດນ.ນອກຈາກສະມະຄົມຜູ້ຈັດສົ່ງສິນຄ້ານີ້ແລ້ວ ໃຫ້ປະຕິບັດຕາມລະບຽບການກົດໝາຍພາສີ.
3. ການແຈ້ງພາສີເປັນລາຍລະອຽດ ບ80 ສຳລັບສິນຄ້າຜ່ານແດນ (ແຕ່ບໍ່ລວມສິນຄ້າທີ່ລັດຖະບານຄຸ້ມຄອງ ແລະ ສິນຄ້າຕ້ອງຫ້າມ) ແມ່ນໃຫ້ດຳເນີນການຢູ່ດ່ານພາສີຊາຍແດນ ບ່ອນສິນຄ້ານຳເຂົ້າ. ບັນດາເອກະສານທີ່ເປັນບ່ອນອີງ ໃນການປະກອບ ມີຄື :
   (1) ສຳເນົາເອກະສານທີ່ໄດ້ຮັບອະນຸຍາດການຄ້ຳປະກັນ ຈາກກົມພາສີ.
   (2) ໃບມອບສິດການຂົນສົ່ງສິນຄ້າ ຈາກຜູ້ຕົວແທນຂົນສົ່ງ ຫລື ຈາກຜູ້ຊື້ ຫລື ຈາກຜູ້ຂາຍ.

(3) ສຳເນົາເອກະສານຂອງເຈົ້າໜ້າທີ່ພາສີ ຂອງປະເທດຕົ້ນທາງ(ປະເທດສົ່ງອອກສິນຄ້າ).

(4) ໃບແຈ້ງລາຄາ(invoice), ໃບຫຸ້ມຫໍ່ສິນຄ້າ(Packing List), ແລະໃບກຳກັບການຂົນສົ່ງ.

(5) ໃບອະນຸຍາດຈາກຂະແໜງການກ່ຽວຂ້ອງ (ສຳລັບສິນຄ້າທີ່ລັດຖະບານຄຸ້ມຄອງ ແລະ ສິນຄ້າຕ້ອງຫ້າມ).

(6) ໃນກໍລະນີ ທີ່ມີການຂົນສົ່ງສິນຄ້າຜ່ານຫລາຍປະເທດ ຕ້ອງມີສຳເນົາໃບແຈ້ງສິນຄ້າຜ່ານແດນຂອງປະເທດໃຫ້ຜ່ານສຸດທ້າຍ.

(7) ໃນກໍລະນີ ທີ່ມີການລະເມີດລະບຽບການຂົນສົ່ງສິນຄ້າຜ່ານແດນ ຢູ່ ສປປ ລາວ ຜູ້ປະກອບການຂົນສົ່ງຕ້ອງໄດ້ ປະຕິບັດຕາມລະບຽບກົດໝາຍພາສີ ຢ່າງເຂັ້ມງວດ.

4. ການແຈ້ງພາສີ ສຳລັບລົດຂົນສົ່ງສິນຄ້າຜ່ານແດນ ຕ້ອງມີເອກະສານປະກອບດັ່ງນີ້, ຄື :

- ສະເພາະບັນດາປະເທດທີ່ໄດ້ລົງນາມຮ່ວມກັນ ວ່າດ້ວຍການອຳນວຍຄວາມສະດວກຂົນສົ່ງສິນຄ້າ ແລະ ຄົນຂ້າມແດນ ຕ້ອງນຳໃຊ້ປື້ມອະນຸຍາດຂົນສົ່ງລະຫ່ວາງປະເທດ, ໃບປະກັນໄພ, ທີ່ມີອາຍຸການນຳໃຊ້.
- ນອກຈາກປະເທດທີ່ໄດ້ກ່າວມາຂ້າງເທິງນີ້ ທີ່ບໍ່ມີປື້ມອະນຸຍາດຂົນສົ່ງລະຫ່ວາງປະເທດ ແມ່ນໃຫ້ນຳໃຊ້ ບ7 ແລະ ອີງໃສ່ເອກະສານແຈ້ງອອກ ຂອງເຈົ້າໜ້າທີ່ປະເທດໃຫ້ຜ່ານສຸດທ້າຍ ແລະ ຕ້ອງມີໃບກວດກາເຕັກນິກ, ປະກັນໄພ ທີ່ມີອາຍຸການນຳໃຊ້.

ແຈ້ງການສະບັບນີ້ ແມ່ນປ່ຽນແທນ ຄຳແນະນຳກົມພາສີ ເລກທີ 0582/ກພສ ລົງວັນທີ 30.1.2006 ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ໃນການປະຕິບັດຕົວຈິງ ຖ້າບໍ່ມີຄວາມເປັນເອກະພາບກັນ ລະຫ່ວາງເຈົ້າໜ້າທີ່ພາສີ ແລະ ຜູ້ປະກອບການຂົນສົ່ງ ໃຫ້ເຈົ້າໜ້າທີ່ພາສີກ່ຽວຂ້ອງ ລາຍງານກົມພາສີເພື່ອຂໍທິດຊີ້ນຳແລະມີວິທີການແກ້ໄຂໃຫ້ທັນການ.

ຫົວໜ້າກົມພາສີ,

ສົມດີພາບ ພົມວິຫານ